# ຄະນະບໍລິຫານງານຊາວໜຸ່ມ ທຫລ ຜ່ານເຂົ້າຮອບ 8 ທີມ




ໃນວັນທີ 03 ທັນວາ 2020 ໄດ້ຈັດການແຂ່ງຂັນກິລາບານເຕະ “ຊີງຂັນທ່ານຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ປະຈຳປີ2020” ຮອບ 16 ທີມລະຫວ່າງ ຄະນະບໍລິຫານງານຊາວໜຸ່ມທະນາຄານແຫ່ງ ສປປ ລາວ ແລະ ຄະນະບໍລິຫານງານຊາວໜຸ່ມກະຊວງກະສິກຳ ແລະ ປ່າໄມ້ ຢູ່ທີ່ສະໜາມກິລາລ້ານຊ້າງສະເຕດ້ຽມ (ໜອງໄຮ) ນະຄອນຫຼວງວຽງຈັນ ຈົບການແຂ່ງຂັນຄະນະບໍລິຫານງານຊາວໜຸ່ມທະນາຄານແຫ່ງ ສປປ ລາວ ຊະນະ ຄະນະບໍລິຫານງານຊາວໜຸ່ມກະຊວງກະສິກຳ ແລະ ປ່າໄມ້ 3-1 ປະຕູ ສາມາດເຂົ້າສູ່ຮອບ 8 ທີມໄດ້ເປັນອັນດັບ 1 ຂອງສາຍ ເຊິ່ງຜ່ານມາສາມາດເອົາຊະນະຄະນະບໍລິຫານງານຊາວໜຸ່ມກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ 1-0 ປະຕູ ແລະ ເອົາຊະນະຄະນະບໍລິຫານງານຊາວໜຸ່ມຄະນະກວດກາສູນກາງພັກ ແລະ ອົງການກວດກາລັດຖະບານ 1-0 ປະຕູ.

 

ການແຂ່ງຂັນກິລາບານເຕະ “ຊີງຂັນທ່ານຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດປະຈໍາປີ2020” ເລີ່ມຈັດມາຕັ້ງແຕ່ວັນທີ 12 ພະຈິກ 2020 ມາຮອດປັດຈຸບັນ ຄະນະບໍລິຫານງານຊາວໜຸ່ມທະນາຄານແຫ່ງ ສປປ ລາວແຂ່ງມາ 3 ນັດຊະນະທັງ 3 ນັດ ແລະ ຮອບຕໍ່ໄປຄາດວ່າຈະໄດ້ພົບກັບຄະນະບໍລິຫານງານຊາວໜຸ່ມກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນວັນທີ 10 ທັນວາ 2020. ດັ່ງນັ້ນ, ເພື່ອເປັນການໃຫ້ກໍາລັງໃຈນັກກິລາຄະນະບໍລິຫານງານຊາວໜຸ່ມ ທຫລ ຂໍເຊີນຊວນບັນດາທ່ານເຂົ້າຮ່ວມຊົມເຊຍທີ່ສະໜາມກິລາລ້ານຊ້າງສະເຕດ້ຽມ (ໜອງໄຮ) ນະຄອນຫຼວງວຽງຈັນ ໃນວັນດັ່ງກ່າວດ້ວຍ.

#ພາບຈາກເຟສບຸກ: **Vice President of The Lao P.D.R Championship**

#ຂ່າວໂດຍ: ນາງ ປາໄນ ພັນທະລາ

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ